ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ: 41/ຫກ

ນະຄອນຫຼວງວຽງຈັນ, ວັນທີ: 18 ຕຸລາ 2016

ສຳນັກງານ ຄຄຂ
ລົງຮັບ ເລກທີ....1018....
ວັນທີ...20 OCT 2016
ໂທລະສັບ 021 217770

# ລາຍງານການເຄື່ອນໄຫວປະຈຳອາທິດ ທີ 26-30/09/2016 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ ຂອງທະນາຄານແຫ່ງ ສປປ ລາວ

## I. ວຽກງານການເມືອງແນວຄິດ

ພະນັກງານທຸກຄົນມີຄວາມອຸ່ນອ່ຽນທຸ່ນທ່ຽງ ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ ມີສະຕິລະບຽບວິໄນຕໍ່ການຈັດຕັ້ງ ແລະ ລະບຽບກົດໝາຍຢ່າງເຂັ້ມງວດ; ຕັ້ງໜ້າປະຕິບັດວຽກງານຕາມພາລະບົດບາດ, ຕາມການຈັດຕັ້ງມອບໝາຍ, ປະຕິບັດວຽກງານຕາມຫຼັກການລວມສູນປະຊາທິປະໄຕ ເຮັດວຽກເປັນໝູ່ຄະນະບຸກຄົນຮັບຜິດຊອບ ແລະ ປະຕິບັດລະບຽບລັດຖະກອນຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

## II. ວຽກງານວິຊາສະເພາະ

### 1. ສະພາບເສດຖະກິດເງິນຕາສາກົນ

#### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາອ່ອນຄ່າລົງ 0,31% ເມື່ອທຽບໃສ່ເງິນເອີໂຣ ແລະ ແຂງຄ່າຂຶ້ນເມື່ອທຽບກັບຫຼາຍສະກຸນເງິນຂອງພາກພື້ນ, ຍ້ອນເສດຖະກິດຂອງສະຫະລັດມີທ່າອ່ຽງດີຂຶ້ນ ເຫັນໄດ້ຈາກຕົວເລກດັດຊະນີລາຄາຜູ້ບໍລິໂພກ ປັບເພີ່ມຂຶ້ນຈາກ 101,8 ມາເປັນ 104,1 ໃນເດືອນ 09/2016.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 23/09/2016 | ອາທິດນີ້ 30/09/2016 | ເປີເຊັນ ແຂງຄ່າ(+) /ອ່ອນຄ່າ(–) |
|---|---|---|---|
| ເອີໂຣ/ໂດລາ | 1.1214 | 1.1179 | 0,31% |
| ໂດລາ/ເຢນ | 100,91 | 101,07 | -0,16% |
| ໂດລາ/ບາດ | 34,640 | 34,650 | -0,03% |
| ໂດລາ/ເປໂຊ | 48,04 | 48,49 | -0,93% |
| ໂດລາ/ຣູເປັຍ | 13,075 | 13.047 | 0,21% |
| ໂດລາ/ໂດລາສິງກະໂປ | 1,3574 | 1,3649 | -0,55% |
| ໂດລາ/ຢວນ | 6,6697 | 6,6690 | 0,01% |

1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

ລາຄານ້ຳມັນເພີ່ມຂຶ້ນ 1,65% ເປັນ 49,34 ໂດລາ/ບາເຣວ ພາຍຫຼັງກອງປະຊຸມ International Energy Forum (IEF)ໄດ້ບັນລຸຂໍ້ຕົກລົງກ່ຽວກັບການກຳນົດເພດານການຜະລິດນ້ຳມັນຂອງກຸ່ມປະເທດໂອເປັກຢູ່ທີ່ລະດັບ 32,5-33 ລ້ານບາເຣວ/ວັນ. ແຕ່ເຖິງຢ່າງໃດກໍຕາມ, ການປັບຂຶ້ນລາຄານ້ຳມັນດັ່ງກ່າວກໍ່ຍັງຢູ່ໃນລະດັບລາຄາທີ່ບໍ່ສູງຫຼາຍ ເນື່ອງຈາກນັກລົງທຶນຍັງມີຄວາມກັງວົນກ່ຽວກັບບັນຫານ້ຳມັນລົ້ນຕະຫຼາດ.ສ່ວນລາຄາຄຳຫຼຸດລົງ 0,70% ເປັນ 1.336,66 ໂດລາ/ອອນ.

2. ສະພາບເສດຖະກິດເງິນຕາພາຍໃນ

2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,10% ສຳລັບອັດຕາ ທຫກ ອ່ອນຄ່າລົງ 0,12% ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດອ່ອນຄ່າ 0,35% ສຳລັບອັດຕາ ທຫກ ແລະ ອ່ອນຄ່າ 0,90% ສຳລັບອັດຕາຕະຫຼາດ. ທຽບໃສ່ປີຜ່ານມາເຫັນວ່າ: ເງິນກີບທຽບໃສ່ເງິນໂດລາແຂງຄ່າຂຶ້ນ 0,47% ສຳລັບອັດຕາ ທຫກ ແລະ ອ່ອນຄ່າລົງ 1,64% ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດອ່ອນຄ່າລົງ 2,98% ສຳລັບອັດຕາ ທຫກ ແລະ ອ່ອນຄ່າລົງ 5,29% ສຳລັບອັດຕາຕະຫຼາດ.

| ອັດຕາ | ອາທິດຜ່ານມາ 23/09/2016 | | | ອາທິດນີ້ 30/09/2016 | | | % (+) ເງິນກີບແຂງ/ (-)ອ່ອນຄ່າ | | |
|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະຄານ[1] | | | | | | | | | |
| ໂດລາ | 8.096,97 | 8.122,14 | 8.106,21 | 8.100,43 | 8.140,33 | 8.114,46 | -0,04% | -0,22% | -0,10% |
| ບາດ | 233,68 | 235,25 | 234,49 | 234,15 | 235,71 | 235,32 | -0,20% | -0,20% | -0,35% |
| ອັດຕາຕະຫຼາດ | | | | | | | | | |
| ໂດລາ | 8.316,67 | 8.340,00 | 8.328,33 | 8.320,00 | 8.356,67 | 8.338,33 | -0,04% | -0,20% | -0,12% |
| ບາດ | 238,67 | 240,33 | 239,50 | 240,67 | 242,67 | 241,67 | -0,83% | -0,96% | -0,90% |
| ຜິດດ່ຽງອັດຕາ ທຫກ ແລະ ຕະຫຼາດ: (+) ແມ່ນອັດຕາທະນາຄານທຸລະກິດແຂງກວ່າຕະຫຼາດ , (-) ແມ່ນອັດຕາທະນາຄານທຸລະກິດອ່ອນກວ່າຕະຫຼາດ. | | | | | | | | | |
| ໂດລາ | 0,45% | 0,46% | 0,48% | 2,71% | 2,68% | 2,74% | | | |
| ບາດ | 0,11% | -0,05% | -0,18% | 2,13% | 2,16% | 2,14% | | | |

2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາ ປະຈຳອາທິດນີ້ເພີ່ມຂຶ້ນ 3,54% ທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 3,59%;
- ປະລິມານເງິນ M2 ຫຼຸດລົງ 1,77% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 11,88%.

2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈຳອາທິດ (ວັນທີ 26-30/09/2016) ເຫັນວ່າ ທຫກ ຊື້ໂດລາສຸດທິ 33,67 ລ້ານໂດລາ (ໃນນີ້ ຊື້ໂດລາໄດ້ 77,42

[1] %ການປ່ຽນແປງຂອງອັດຕາແລກປ່ຽນ ໃນອັດຕາຂອງ ທຫກ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ;

ລ້ານໂດລາ ແລະ ຂາຍໂດລາໄດ້ 43,75 ລ້ານໂດລາ) ແລະ ຂາຍເງິນບາດສຸດທິ 1.084,70 ລ້ານບາດ (ໃນນີ້ ຊື້ບາດໄດ້ 434,30 ລ້ານບາດ ແລະ ຂາຍບາດໄດ້ 1,563,98 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາເພີ່ມຂຶ້ນ 36,87%% ແລະ ເພີ່ມຂຶ້ນ 14,60% ສຳລັບເງິນບາດ;

- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ປະລິມານການຊື້-ຂາຍເງິນໂດລາມີຈຳນວນ 5,95 ລ້ານໂດລາ ແລະ ຊື້ເງິນບາດສຸດທິ 63,70 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍໂດລາສຸດທິ ຈຳນວນ 18,65 ລ້ານໂດລາ ແລະ ເງິນບາດ 22,00 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນອື່ນໆ ເຫັນວ່າ: ທຫລ ຂາຍໂດລາສຸດທິ ຈຳນວນ 80,13 ລ້ານໂດລາ ແລະ ເງິນບາດບໍ່ມີການເຄື່ອນໄຫວຊື້-ຂາຍ.

**ສະພາບການ ຊື້-ຂາຍເງິນຕາຕ່າງປະເທດ**

(ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 19-23/09/2016 | | ອາທິດທີ 26-30/09/2016 | | (%) +ເພີ່ມຂຶ້ນ /-ຫລຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| 1. <u>ການຊື້ເງິນຕາຕ່າງປະເທດ</u> | **60,54** | **434,30** | **77,42** | **479,28** | **27,88%** | **10,36%** |
| - ທ/ຄທຸລະກິດລັດ | 9,57 | 99,35 | 23,69 | 116,52 | 147,54% | 17,28% |
| - ທ/ຄທຸລະກິດອື່ນໆ | 50,97 | 334,95 | 53,73 | 362,76 | 5,41% | 8,30% |
| 2. <u>ການຂາຍເງິນຕາຕ່າງປະເທດ</u> | **27,99** | **1.348,64** | **43,75** | **1,563,98** | **56,31%** | **15,97%** |
| - ທ/ຄທຸລະກິດລັດ | 11,72 | 136,70 | 16,86 | 161,46 | 43,86% | 18,11% |
| - ທ/ຄທຸລະກິດອື່ນໆ | 16,27 | 1.211,94 | 26,89 | 1.402,52 | 65,27% | 15,73% |
| <u>ຊື້-ຂາຍສຸດທິ ທທກ</u> | **32,55** | **-914,34** | **33,67** | **-1.084,70** | **3,44%** | **18,63%** |
| - ຜິດດ່ຽງ ຊື້-ຂາຍ | 53,77% | -210,53% | 43,49% | -226,32% | -19,11% | 7,50% |
| - ມູນຄ່າການຊື້-ຂາຍ | 88,53 | 1.782,94 | 121,17 | 2.043,26 | 36,87% | 14,60% |
| 3. <u>ການຊື້ຂາຍລະຫວ່າງ ທຫລ ກັບ ທທກ</u> | **-5,55** | **0,00** | **-18,65** | **-22,00** | | |
| - ທຫລ ຊື້ຈາກ ທທກ | 0,00 | 14,50 | 0,00 | 0,00 | | |
| - ທຫລ ຂາຍໃຫ້ ທທກ | 5,55 | 14,50 | 18,65 | 22,00 | | |
| 4. <u>ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ</u> | **5,00** | **76,21** | **5,95** | **63,70** | | |
| 5. <u>ທຫລ ກັບ ພາກສ່ວນ ອື່ນໆ</u> | **80,13** | 0,00 | **80,13** | 0,00 | | |
| -ທຫລ ຊື້ຈາກ ພາກສ່ວນອື່ນໆ | 80,15 | 0,00 | 0,00 | 0,00 | | |
| -ທຫລ ຂາຍໃຫ້ພາກສ່ວນອື່ນໆ | 0,02 | 0,00 | 0,02 | 0,00 | | |

2.4 <u>ສະພາບອັດຕາເງິນເຟີ້</u>

ອັດຕາເງິນເຟີ້ ໃນເດືອນ 09/2016 ຢູ່ໃນລະດັບ 1,85% ຫຼຸດລົງຈາກ 1,97% ໃນເດືອນ 08/2016.

2.5 <u>ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ</u>

ທຫລ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຈຳນວນ 89,45 ລ້ານໂດລາສະຫະລັດທຽບເທົ່າ ເພີ່ມຂຶ້ນ 85,1% ເມື່ອທຽບໃສ່ອາທິດຜ່ານມາ.

## III. ວຽກງານວິຊາສະເພາະ

### 1. ສະພາບການເຄື່ອນໄຫວຊໍາລະສະສາງຜ່ານທະນາຄານແຫ່ງ ສປປ ລາວ

ແຊັກເຄື່ອນໄຫວຜ່ານສູນຊໍາລະສະສາງຂອງ ທຫລ ໃນອາທິດນີ້ ຈໍານວນ 984 ສະບັບ ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 101 ສະບັບ ເທົ່າກັບ 11,43% ລວມຈໍານວນເງິນທີ່ໂອນຜ່ານທັງໝົດ 400,80 ຕື້ກີບ ຫຼຸດລົງ 40,05% ເມື່ອທຽບໃສ່ອາທິດຜ່ານມາ.

ການໂອນເງິນຜ່ານລະບົບຊໍາລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (23-29/09/2016) ມີຈໍານວນ 2.570 ຄັ້ງ ໂດຍມີມູນຄ່າ 543,63 ຕື້ກີບ ຊຶ່ງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ເຮັດທຸລະກໍາຫຼາຍກວ່າໝູ່ ຈໍານວນ 658 ຄັ້ງ.

### 2. ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ

ດັດຊະນີຕະຫຼາດຫຼັກຊັບລາວ ໃນອາທິດນີ້ ປິດຢູ່ທີ່ 996,46 ຈຸດ ຫຼຸດລົງ 1,47% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດ ມີປະລິມານຊື້-ຂາຍຮຸ້ນທັງໝົດ 161.800 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 784,90 ລ້ານກີບ ເພີ່ມຂຶ້ນ 183,99% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ່ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 64,5257% ຂອງມູນຄ່າການຊື້-ຂາຍທັງໝົດ.

ຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 4.828 ກີບ/ຮຸ້ນ ຫຼຸດລົງ 51 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 12.700 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 61,31 ລ້ານກີບ ຫຼຸດລົງ 13,361% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດກວມເອົາ 39,49% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນຢູ່ທີ່ 9,35%[2].

ຮຸ້ນຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 4.853 ກີບ/ຮຸ້ນ ຫຼຸດລົງ 32 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 149.100 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 723.59 ລ້ານກີບ ຫຼຸດລົງ 252,70% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດກວມເອົາ 58,27% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 13,84%[3].

ຮຸ້ນຂອງບໍລິສັດ ລາວເວີນ ມະຫາຊົນ (LWPC) ມີລາຄາປິດ 6.200 ກີບ ບໍ່ມີການປ່ຽນແປງເມື່ອທຽບກັບອາທິດຜ່ານມາ, ສັດສ່ວນຖືຄອງຮຸ້ນຂອງຜູ່ລົງທຶນຕ່າງປະເທດແມ່ນ 2,77%[4].

ຮຸ້ນຂອງບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (PTL) ມີລາຄາປິດ 2.500 ກີບ ບໍ່ມີການປ່ຽນແປງເມື່ອທຽບກັບອາທິດຜ່ານມາ, ສັດສ່ວນຖືຄອງຮຸ້ນຂອງຜູ່ລົງທຶນຕ່າງປະເທດ ແມ່ນ 12,66%[5].

ຮຸ້ນຂອງບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ (SVN) ມີລາຄາປິດ 3.100 ກີບ ບໍ່ປ່ຽນແປງ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ໃນອາທິດນີ້ ບໍ່ມີການຈັບຄູ່ຊື້-ຂາຍ. ສັດສ່ວນຖືຄອງຮຸ້ນຂອງຜູ່ລົງທຶນຕ່າງປະເທດແມ່ນ 4,20%[6].

---

ລາຄາສະເລ່ຍ ແມ່ນລາຄາທີ່ສະເລ່ຍຊື້-ຂາຍຕໍ່ຮຸ້ນພາຍໃນອາທິດນັ້ນ;

[2]ສັດສ່ວນຖືຄອງຮຸ້ນ BCEL ຂອງຜູ້ລົງທຶນຕ່າງປະເທດ ສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 10%, 1% ສໍາລັບຜູ້ລົງທຶນປະເພດບຸກຄົນ ແລະ 1% ສໍາລັບຜູ້ລົງທຶນປະເພດສະຖາບັນ;

[3]ສັດສ່ວນຖືຄອງຮຸ້ນ EDL-Gen ຂອງຜູ້ລົງທຶນຕ່າງປະເທດ ສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 25%, 1% ສໍາລັບຜູ້ລົງທຶນປະເພດບຸກຄົນ ແລະ 5% ສໍາລັບຜູ້ລົງທຶນປະເພດສະຖາບັນ;

[4]ສັດສ່ວນຖືຄອງຮຸ້ນ LWPC ຂອງຜູ່ລົງທຶນຕ່າງປະເທດ ແມ່ນບໍ່ມີກໍານົດ;

[5]ສັດສ່ວນຖືຄອງຮຸ້ນ PTL ຂອງຜູ່ລົງທຶນຕ່າງປະເທດ ແມ່ນບໍ່ມີກໍານົດ;

[6]ສັດສ່ວນຖືຄອງຮຸ້ນ SVN ຂອງຜູ່ລົງທຶນຕ່າງປະເທດ ແມ່ນບໍ່ມີກໍານົດ.

3. <u>ວຽກງານອື່ນໆ ທີ່ພົ້ນເດັ່ນ.</u>

- ຄະນະຜູ້ວ່າການທະນາຄານແຫ່ງ ສປປ ລາວ ໄດ້ສໍາເລັດ: ❶ ເປັນປະທານກອງປະຊຸມວຽກງານ Basell 2 ທີ່ ທຫລ, ❷ ເປັນປະທານກອງປະຊຸມປຶກສາຫາລືຄະນະຮັບຜິດຊອບກົດໝາຍວ່າດ້ວຍ ທະນາຄານທຸລະກິດ ທີ່ ທຫລ, ❸ ເປັນປະທານກອງປະຊຸມສະຫຼຸບການມາປະເມີນສະພາບເສດຖະກິດມະຫາພາກຊອງ ສປປ ລາວ ຂອງ IMF;

- ສໍາເລັດການເຂົ້າຮ່ວມກອງປະຊຸມ: ❶ ກອງປະຊຸມຄະນະລັດຖະບານສະໄໝວິສາມັນ ປະຈໍາເດືອນ ກັນຍາ 2016 ທີ່ຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ; ❷ ກອງປະຊຸມສະເໜີ ແລະ ປະກອບຄໍາເຫັນຕໍ່ກອງປະຊຸມ ລະຫວ່າງ ສະພາແຫ່ງຊາດ ສປປ ລາວ ຮ່ວມກັບ ສະພາແຫ່ງຊາດ ສສ. ຫວຽດນາມ ທີ່ໂຮງແຮມເມືອງແທງ, ❸ ເຂົ້າຮ່ວມກອງປະຊຸມ EXCO ຂອງສູນ SEACEN ທີ່ປະເທດຟີລິປິນ ❹ ຮັບແຂກເຂົ້າພົບ ທ່ານ Omar ຜູ້ບໍລິຫານກຸ່ມ SEAVG;

- ເດີນທາງໄປເຄື່ອນໄຫວວຽກງານທາງລັດຖະການທີ່ແຂວງ ຊຽງຂວາງ ແລະ ປະເທດ ສສ. ຫວຽດນາມ;

- ສໍາເລັດການເຂົ້າຮ່ວມກອງປະຊຸມເຜີຍແຜ່ບົດວິເຄາະຄວາມຍືນຍົງຂອງໜີ້ສິນພາກລັດ ຂອງ ສປປ ລາວ ຈາກຄະນະທີມງານ IMF (Debt Sustainabilily Analysis);

- ສໍາເລັດການຈັດສໍາມະນາຝຶກອົບຮົມກ່ຽວກັບວຽກງານຄຸ້ມຄອງທະນາຄານທຸລິດ ໃຫ້ພະນັກງານທະນາຄານແຫ່ງ ສປປ ລາວ ພາກກາງ ທີ່ສະຫວັນນະເຂດ ແລະ ທະນາຄານ ສປປ ລາວ ພາກໃຕ້ ທີ່ແຂວງ ຈໍາປາສັກ;

- ສໍາເລັດການຈັດກອງປະຊຸມການສົ່ງເສີມການຮ່ວມມືລະຫວ່າງທະນາຄານທຸລະກິດ ແລະ ທະນາຄານທຸລະກິດໄທ ຄັ້ງທີ V;

- ສໍາເລັດການຈັດກອງປະຊຸມຮ່ວມກັບ ກອງທຶນຫຼຸດຜ່ອນຄວາມທຸກຍາກ;

- ສໍາເລັດການກອດກາສຸກເສີນການຊື້ຂາຍເງິນຕາ ແລະ ລົງກວດກາເຜີຍແຜ່ຄ່າທໍານຽມສິນເຊື່ອ ຂອງທະນາຄານການຄ້າສາກົນ ຈໍາກັດ, ສໍາເລັດການລົງກວດກາປະຈໍາປີ 2015 ທະນາຄານການຄ້າສາກົນ ແລະ ທະນາຄານກະສິກອນໄທ ຈໍາກັດ;

- ສໍາເລັດການຈັດພິທີມອບ-ຮັບປະກາສະນີຍະບັດ ສິກສຶກສາ 2015-2016 ຈໍານວນ 2.119 ຄົນ;

- ເຂົ້າຮ່ວມຝຶກອົບຮົມ ແລະ ສໍາມະນາດ້ານວິຊາການ ໃນຫົວຂໍ້ "ຄວາມສ່ຽງດ້ານສະພາບຄ່ອງ" ທີ່ປະເທດ ບຣູໄນ;

- ສໍາເລັດການຖອນທຶນຈົດທະບຽນ ແລະ ການປ່ຽນແປງໃບອະນຸຍາດດໍາເນີນທຸລະກິດບໍລິສັດ ມະຫາທຶນ ເຊົ່າສິນເຊື່ອຈໍາກັດ;

- ສໍາເລັດການລົງກວດກາປະຈໍາປີ 2015 ໂຮງຊວດຈໍາ 04 ແຫ່ງ ແລະ ບໍລິສັດໂອນເງິນດ່ວນ 04 ແຫ່ງ;

4. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>

- ຄະນະຜູ້ວ່າການທະນາຄານແຫ່ງ ສປປ ລາວ ກະກຽມ: ❶ ສືບຕໍ່ເຂົ້າຮ່ວມກອງປະຊຸມລະດັບລັດຖະມົນຕີ ແລະ ຜູ້ວ່າການ, ❷ ເຂົ້າຮ່ວມກອງປະຊຸມປະຈໍາປີ IMF/WB ທີ່ປະເທດ ສ. ອາເມລິກາ, ❸ ກະກຽມເດີນທາງໄປເຄື່ອນໄຫວວຽກງານທາງລັດຖະການຢູ່ປະເທດ ສສ. ຫວຽດນາມ, ❹ ກະກຽມຮັບແຂກເຂົ້າພົບ ຂອງທູດອັງກິດ ປະຈໍາລາວ;

- ສືບຕໍ່ດໍາເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນ ດັ່ງທີ່ໄດ້ກໍານົດໄວ້ໃນແຜນວຽກງານປະຈໍາປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ;

- ຕິດຕາມຢ່າງເປັນປົກກະຕິໂດຍສະເພາະຕະຫຼາດເປີດ, ອັດຕາດອກເບ້ຍ ແລະ ອັດຕາແລກປ່ຽນລະຫວ່າງທະນາຄານ;

- ສືບຕໍ່ສຶກສາຄົ້ນຄວ້າເນື້ອໃນຂອງຫຼັກການ ບາເຊວ 2, ວິທີປະຕິບັດ ແລະ ບົດຮຽນຂອງສາກົນ ເພື່ອເປັນແນວທາງໃນການຄົ້ນຄວ້າ ແລະ ຈັດຕັ້ງປະຕິບັດ;

- ສືບຕໍ່ລົງເລິກຄົ້ນຄວ້າດ້ານນິຕິກຳຂອງ ບໍລິສັດ ມາຍ ເຊົ່າສິນເຊື່ອ ຈຳກັດ, ບໍລິສັດດີຈີບີລາວ ເຊົ່າສິນເຊື່ອ ຈຳກັດ, ສກຈບ ວາລີລັກ, ສກຈບ ຈະເລີນຊັບ, ສກຈບ ອຳມະລາ ມະຫາອຸດ ແລະ ສກຈບ ປັນຍາພອນ;

- ສືບຕໍ່ລົງສຳຫຼວດຖານະການລົງທຶນລະຫວ່າງປະເທດ (IIP Survey) ພາກສະໜາມ 3 ແຂວງພາກກາງ ແລະ 4 ແຂວງພາກໃຕ້;

- ກະກຽມເນື້ອໃນເຂົ້າຮ່ວມກອງປະຊຸມຄະນະກຳມະການລະດັບສູງ (SLC) ຄັ້ງທີ 12 ແລະ ຄະນະກຳມະການເສີມສ້າງຄວາມອາດສາມາດ (SCCB) ຄັ້ງທີ 11 ທີ່ ຈາກາຕ້າ, ປະເທດ ອິນໂດເນເຊຍ;

- ກະກຽມເນື້ອໃນເຂົ້າຮ່ວມກອງປະຊຸມທີ່ປະເທດ ອັງກິດ ໃນຫົວຂໍ້ "Balanced economies, balanced societies: Promoting gender parity in politics and business";

- ສືບຕໍ່ກະກຽມຈັດກອງປະຊຸມເຜີຍແຜ່ ແລະ ຜັນຂະຫຍາຍເນື້ອໃນກອງປະຊຸມວຽກງານກວດກາທົ່ວປະເທດ ຄັ້ງທີ III.

ຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ.

ຫ້ອງການ

ເພັດສະຖາພອນ ແກ້ວວົງວິຈິດ